Minnesota Department of Education

ຄຳຖາມ ແລະຄຳຕອບກ່ຽວກັບ
MCA-Modified (MCA-ທີ່ດັດແປງ) ຂອງວິຊາຄະນິດສາດ ແລະຫັດ ອ່ານ
ລະດູໃບໄມ້ປົ່ງ 2014

MCA-Modified (MCA-ທີ່ດັດແປງ) ແມ່ນຫຍັງ?

Minnesota Comprehensive Assessments-Modified (ການປະເມີນຜົນແບບຄົບວົງຈອນຂອງ ມິນນີໂຊຕາ-ທີ່ດັດແປງ) (MCA-ທີ່ດັດແປງ) ແມ່ນການປະເມີນຜົນແບບທາງ ເລືອກອັນໜຶ່ງທີ່ອີງໃສ່ມາດຕະຖານການປະສົບຜົນສຳເລັດທີ່ໄດ້ດັດແປງ ສຳລັບກຸ່ມຈຳກັດໃດໜຶ່ງຂອງນັກຮຽນພາກພິເສດຜູ້ທີ່ຄວາມພິການເປັນ ອຸປະສັກເຮັດໃຫ້ບໍ່ສາມາດສອບເສັງໄດ້ລະດັບເກັ່ງ. MCA-Modified (MCA-ທີ່ດັດ ແປງ) ແມ່ນສ່ວນໜຶ່ງຂອງໂປຣແກຣມການປະເມີນຜົນມິນນີໂຊຕາ ໃນສົກສຶກສາ 2013–2014.

MCA-Modified (MCA-ທີ່ດັດແປງ) ວັດແທກຄວາມສາມາດດ້ານວິຊາຄະນິດສາດ ແລະຫັດ ອ່ານ ໂດຍອີງຕາມມາດຕະຖານເນື້ອໃນຂອງລະດັບ-ຊັ້ນຮຽນ. ການປະເມີນຜົນແມ່ນມີ ຄວາມຫຍຸ້ງຍາກໜ້ອຍກ່ວາ Minnesota Comprehensive Assessments (MCA - ການປະເມີນ ຜົນແບບຄົບວົງຈອນຂອງມິນນີໂຊຕາ) ທີ່ນັກຮຽນທົ່ວໄປຈະສອບເສັງ, ແລະຄວາມ ຄາດຫວັງຂອງການປະສົບຜົນສຳເລັດແມ່ນມີຄວາມເຂັ້ມງວດໜ້ອຍກ່ວາ.

ຈຸດປະສົງຂອງ MCA-Modified (MCA-ທີ່ດັດແປງ)ແມ່ນຫຍັງ?

MCA-Modified (MCA-ທີ່ດັດແປງ) ແມ່ນໜຶ່ງໃນບັນດາການສອບເສັງທີ່ໃຊ້ເຂົ້າໃນ ການປະເມີນຄວາມໜ້າເຊື່ອຖືຂອງໂຮງຮຽນທີ່ຢູ່ໃນຣັຖບານກາງຂອງ Elementary and Secondary Education Act (ESEA - ກົດໝາຍວ່າດ້ວຍການສຶກສາຊັ້ນປະຖົມ ແລະມັດທະຍົມ); ມັນແມ່ນໜຶ່ງໃນບັນດາການປະເມີນຜົນແບບທາງເລືອກທີ່ ໃຊ້ແທນ MCA.

ບັນດາໂຮງຮຽນແມ່ນມີໜ້າທີ່ໃຫ້ການສຶກສາຕາມຄວາມຕ້ອງການດ້ານການສຶກສາ ສຳລັບນັກຮຽນທຸກຄົນ. ນັກຮຽນບາງຄົນບໍ່ສາມາດບັນລຸຄະແນນໃນລະດັບເກັ່ງຂອງ

ລະດັບ-ຊັ້ນຮຽນເນື່ອງຈາກຄວາມເປັນຄົນພິການຂອງພວກເຂົາ, ແລະ MCA-Modified (MCA-ທີ່ດັດແປງ) ຈະຊ່ວຍຮັບປະກັນວ່າໂຮງຮຽນໃຫ້ການສິດສອນວິຊາຄະນິດສາດ ແລະຫັດຂ່ານທີ່ຊ່ວຍໃຫ້ນັກຮຽນເຫຼົ່ານັ້ນໄດ້ຮຽນຮູ້ເນື້ອໃນຂອງລະດັບ-ຊັ້ນຮຽນ.

ແມ່ນໃຜຕ້ອງໄດ້ສອບເສັງສິ່ງນີ້?

ESEA ຮຽກຮ້ອງໃຫ້ນັກຮຽນທຸກຄົນໃນໂຮງຮຽນຮັຖເຂົ້າຮ່ວມໃນໂປຣແກຣມການປະເມີນຜົນທົ່ວຮັຖ. MCA-Modified (MCA-ທີ່ດັດແປງ) ແມ່ນກະກຽມໄວ້ສຳລັບຊັ້ນຮຽນສະເພາະໃນວິຊາຫັດຂ່ານ (5–8 ແລະ 10) ແລະ ວິຊາຄະນິດສາດ (5–8 ແລະ 11).

MCA-Modified (MCA-ທີ່ດັດແປງ)ອາດຈະເໝາະສົມສຳລັບນັກຮຽນຈຳນວນຫນຶ່ງໃນ Individualized Education Programs (IEP - ໂປຣແກຣມການສຶກສາສະເພາະບຸກຄົນ). ນັກຮຽນອາດຈະສອບເສັງ MCA-Modified (MCA-ທີ່ດັດແປງ) ໃນວິຊາຫັດຂ່ານ ແລະ/ຫຼືຄະນິດສາດ ແທນ MCA. ທີມ IEP ມີຫນ້າທີ່ຮັບຜິດຊອບກຳນົດວ່ານັກຮຽນຈະເຂົ້າຮ່ວມໃນການສອບເສັງທົ່ວຮັຖໄດ້ແນວໃດ.

*Alternate Assessment Eligibility Requirements (ເງື່ອນໄຂຂອງການໄດ້ຮັບສິດໃນການປະເມີນຜົນແບບທາງເລືອກ)*ສະຫນອງຄູ່ມືໃຫ້ແກ່ທີມ IEP ເພື່ອຊ່ວຍໃຫ້ພວກເຂົາກຳນົດວ່າໃຜຄວນຈະເໝາະສົມສອບເສັງ MCA-Modified (MCA-ທີ່ດັດແປງ). ສຳລັບ*ຂໍ້ມູນເພີ່ມເຕີມໃຫ້ເຂົ້າເບິ່ງAlternate Assessment Eligibility Requirements (ເງື່ອນໄຂຂອງການໄດ້ຮັບສິດໃນການປະເມີນຜົນແບບທາງເລືອກ)ຢູ່ເວັບໄຊທ໌ຂອງ* MDE. (ໄປທີ່ School Support (ການຊ່ວຍເຫຼືອໂຮງຮຽນ) > Test Administration (ບໍລິຫານການສອບເສັງ) > Minnesota Tests (ການສອບເສັງຂອງມິນນີ�โซตา).)

ຈະເຮັດແນວໃດຈຶ່ງຜ່ານການສອບເສັງ?

ນັກຮຽນທີ່ສອບເສັງ MCA-Modified (MCA-ທີ່ດັດແປງ) ບໍ່ຜ່ານຫຼືເສັງຕົກ. ນັກຮຽນແຕ່ລະຄົນທີ່ໄດ້ຮັບຄະແນນຫນຶ່ງໃນສີ່ຂອງລະດັບທີ່ປະສົບຜົນສຳເລັດ:

- ບໍ່ສາມາດປະຕິບັດໄດ້ຕາມເກນມາດຕະຖານຂອງການປະສົບຜົນສຳເລັດທີ່ໄດ້ດັດແປງ

- ສາມາດປະຕິບັດໄດ້ຕາມເກນມາດຕະຖານຂອງການປະສົບຜົນສຳເລັດສ່ວນໃດ ສ່ວນຫນຶ່ງ
- ສາມາດປະຕິບັດໄດ້ຕາມເກນມາດຕະຖານຂອງການປະສົບຜົນສຳເລັດ
- ສາມາດປະຕິບັດໄດ້ເກີນເກນມາດຕະຖານຂອງການປະສົບຜົນສຳເລັດ

MCA-Modified (MCA-ທີ່ດັດແປງ) ຈະບໍ່ໃຊ້ເພື່ອກຳນົດວ່າລູກຫຼານຂອງທ່ານສາມາດເຂົ້າຮຽນຕໍ່ຍູ່ຊັ້ນຮຽນຕໍ່ໄປໄດ້ບໍ່. ຊັ້ນຮຽນປີທີ 10 ວິຊາຫັດຂ່ານຂອງ MCA-Modified (MCA-ທີ່ດັດແປງ) ແລະຊັ້ນຮຽນປີທີ 11 ວິຊາຄະນິດສາດຂອງ MCA-Modified (MCA-ທີ່ດັດແປງ) ອາດໃຊ້ເພື່ອໃຫ້ປະຕິບັດໄດ້ຕາມເງື່ອນໄຂຂອງການປະເມີນຜົນການຈົບການສຶກສາ. ຖ້ານັກຮຽນສາມາດບັນລຸຫຼືໄດ້ເກີນ Modified Achievement Stanadards (ເກນມາດຕະຖານຂອງການປະສົບຜົນສຳເລັດທີ່ໄດ້ດັດແປງ), ຫມາຍຄວາມວ່າພວກເຂົາສາມາດປະຕິບັດຕາມເງື່ອນໄຂການປະເມີນຜົນການຈົບການສຶກສາສຳລັບວິຊານັ້ນໆ. ເຂົ້າເບິ່ງ Graduation Assessment Requirements Parent Fact Sheet (ຄູ່ມືຂອງພໍ່ແມ່ຜູ້ປົກຄອງກ່ຽວກັບເງື່ອນໄຂໃນການປະເມີນຜົນການຈົບການສຶກສາ) ຢູ່ເວັບໄຊທ໌ຂອງ MDE ສຳລັບຂໍ້ມູນເພີ່ມເຕີມກ່ຽວກັບເງື່ອນໄຂຂອງການປະເມີນຜົນການຈົບການສຶກສາ. (ເຂົ້າໄປຫາ Just for Parents (ສຳລັບພໍ່ແມ່ຜູ້ປົກຄອງເທົ່ານັ້ນ) > Testing Information (ຂໍ້ມູນຂອງການສອບເສັງ.)

ການສອບເສັງດຳເນີນແນວໃດ?

ການສອບເສັງວິຊາຫັດຂ່ານຂອງ MCA-Modified (MCA-ທີ່ດັດແປງ) ຢູ່ໃນຊັ້ນຮຽນປີທີ 5–8 ແລະ 10 ແລະວິຊາຄະນິດສາດຂອງ MCA-Modified (MCA-ທີ່ດັດແປງ)ໃນຊັ້ນຮຽນປີທີ 5–8 ແລະ 11 ແມ່ນດຳເນີນຮອບລາຍນ້ຳ.

ລາຍການຕົວຢ່າງຊ່ວຍໃຫ້ນັກຮຽນຄຸ້ນເຄີຍກັບຮູບແບບຂອງການສອບເສັງແລະໃຫ້ຕົວຢ່າງປະເພດຂອງຄຳຖາມທີ່ຢູ່ໃນການສອບເສັງ.
ທ່ານສາມາດເບິ່ງລາຍການຕົວຢ່າງສຳລັບແຕ່ລະຊັ້ນຮຽນແລະວິຊາຮຽນຢູ່ຫ້ອງ Minnesota Assessments (ການປະເມີນຜົນຂອງມິນນີໂຊຕາ) ທີ່ເວັບໄຊທ໌ (www.mnstateassessments.org). ເບິ່ງລາຍການຕົວຢ່າງຢູ່ຫ້ອງ Minnesota Assessments.

ທັກສະຄວາມສາມາດອັນໃດແດ່ທີ່ຈະຖືກປະເມີນຢູ່ໃນ MCA-Modified (MCA-ທີ່ດັດແປງ)?

ທັງ MCA ແລະ MCA-Modified (MCA-ທີ່ດັດແປງ) ປະເມີນການສະແດງອອກຂອງນັກຮຽນຢູ່ໃນ Minnesota Academic Standards (ມາດຕະຖານທາງດ້ານການສຶກສາຂອງມິນນີໂຊຕາ). ໃຫ້ເຂົ້າເບິ່ງ Minnesota Academic Standards (ມາດຕະຖານການສຶກສາຂອງມິນນີໂຊຕາ) ຢູ່ທີ່ເວັບໄຊທ້ຂອງ MDE. (ໄປທີ່ Educator Excellence (ຄວາມດີເລີດຂອງຜູ້ໃຫ້ການສຶກສາ) > Standards, Curriculum and Instruction (ມາດຕະຖານ, ຫຼັກສູດແລະການສິດສອນ) > K-12 Academic Standards (ມາດຕະຖານການສຶກສາ K-12).) ວິຊາຫັດອ່ານຂອງ MCA-Modified (MCA-ທີ່ດັດແປງ) ແມ່ນນອນຢູ່ໃນມາດຕະຖານດ້ານວິຊາການປີ 2010. ວິຊາຄະນິດສາດ MCA-Modified (MCA-ທີ່ດັດແປງ) ແມ່ນນອນຢູ່ໃນມາດຕະຖານດ້ານວິຊາການປີ 2007.

ວິຊາຫັດອ່ານ

ວິຊາຫັດອ່ານຂອງ MCA-Modified (MCA-ທີ່ດັດແປງ) ປະເມີນຄວາມເຂົ້າໃຈຂອງນັກຮຽນຕໍ່ເນື້ອໃນທີ່ເປັນແບບວັນນະຄະດີແລະ ບໍ່ແມ່ນແບບວັນນະຄະດີ. ໂດຍທົ່ວໄປແລ້ວ ເນື້ອໃນຈະສັ້ນກ່ວາຂອງ MCA, ແລະ ເນື້ອໃນສ່ວນຫຼາຍຈະຢູ່ຕອນທ້າຍທີ່ຕ່ຳກ່ວາຂອບເຂດທີ່ສາມາດອ່ານໄດ້ສຳລັບແຕ່ລະຊັ້ນຮຽນ. ບາງລາຍການແມ່ນຈະຖືກຈັດເປັນກຸ່ມດ້ວຍພາກທີ່ກ່ຽວຂ້ອງຂອງເນື້ອໃນ, ແລະບັນດາລາຍການທີ່ອ້າງອີງໃສ່ເນື້ອໃນທັງໝົດທີ່ປະກົດຢູ່ຕອນທ້າຍ.

ວິຊາຄະນິດສາດ

ລາຍການຂອງວິຊາຄະນິດສາດໃນ MCA-Modified (MCA-ທີ່ດັດແປງ) ແມ່ນຈະຖືກສະໜັບສະໜູນດ້ວຍຮູບກຣາຟິກ ເມື່ອເຫັນວ່າຈຳເປັນ. ເນື້ອໃນຂອງການອ່ານແມ່ນມີໜ້ອຍລົງ ແລະ ເຄື່ອງຊ່ວຍອ່ານແບບມີສຽງດັງຈະມີໃຫ້ຢູ່ຄອມພິວເຕີ. ສູດຕ່າງໆແມ່ນມີຢູ່ໃນລາຍການໃຫ້ຫຼື ແຍກສູດໃສ່ໃນເຈ້ຍຕ່າງຫາກ.

ຂ້າພະເຈົ້າສາມາດເບິ່ງຜົນສອບຂອງ MCA-Modified (MCA-ທີ່ດັດແປງ) ຂອງລູກຫຼານ, ໂຮງຮຽນ ແລະ ເມືອງຂອງຂ້ອຍໄດ້ແນວໃດ?

ເມືອງທີ່ໂຮງຮຽນປະຈຳຢູ່ຈະໄດ້ຮັບລາຍງານຂອງນັກຮຽນແຕ່ລະຄົນ ທີ່ໄດ້ສອບເສັງ MCA-Modified (MCA-ທີ່ດັດແປງ) ແລະຈະສະໜອງຂໍ້ມູນນີ້ໃຫ້ແກ່ພໍ່ແມ່ແລະຜູ້ປົກຄອງ. ບົດລາຍງານນີ້ສະແດງໃຫ້ເຫັນຄະແນນທົ່ວໄປຂອງລູກ

ຫຼານທ່ານໃນແຕ່ລະວິຊາ, ເຊັ່ນດຽວກັບຄະແນນໃນຂົງເຂດທັກສະຄວາມສາມາດສະເພາະ ຂອງແຕ່ລະວິຊາ. ໂຮງຮຽນອາດຈະໃຊ້ຂໍ້ມູນນີ້ ເພື່ອຊ່ວຍໃນການປະເມີນ ປະສິດທິຜົນຂອງການສິດສອນ, ແລະທີມ IEP ສາມາດເລືອກນຳໃຊ້ຂໍ້ມູນນີ້ ເພື່ອປັບນມາດຕະການຫນຶ່ງຂອງຄວາມກ້າວຫນ້າໃນການສຶກສາເຊັ່ນກັນ.

ຜົນຂອງໂຮງຮຽນ ແລະເມືອງ ແມ່ນສາມາດເບິ່ງໄດ້ໃນໜວດ Data for Parents and Educators (ຂໍ້ມູນສຳລັບພໍ່ແມ່ ແລະຜູ້ໃຫ້ການສຶກສາ) ຈາກ Data Center (ສູນ ຂໍ້ມູນ) ທີ່ເວັບໄຊທ໌ຂອງ MDE. ເຂົ້າໄປທີ່ໜວດ Data for Parents and Educators (ຂໍ້ມູນສຳລັບພໍ່ແມ່ ແລະຜູ້ໃຫ້ການສຶກສາ) ຢູ່ເວັບໄຊທ໌ຂອງ MDE. (ໄປ ທີ່ Data Center (ສູນຂໍ້ມູນ) > Data for Parents and Educators (ຂໍ້ມູນສຳລັບພໍ່ ແມ່ ແລະຜູ້ໃຫ້ການສຶກສາ.)

ສຳລັບຂໍ້ມູນເພີ່ມເຕີມ, ໃຫ້ຕິດຕໍ່ຫາ:

Statewide Testing (ການສອບເສັງໃນທົ່ວລັດ)

mde.testing@state.mn.us

Minnesota Department of Education

1500 Highway 36 West

Roseville, MN 55113-4266

http://education.state.mn.us

ສົງຫາ2013